**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ໄຊຍະບູລີ

ຄະນະກຳມະການປົກຄອງແຂວງ

ເລກທີ 370 /ຄປຂ

ໄຊຍະບູລີ, ວັນທີ 18 / 03 /2026

# ຂໍ້ຕົກລົງ

# ວ່າດ້ວຍ ການຄຸ້ມຄອງ,

# ພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ), ເລກທີ 78/ສພຊ, ລົງວັນທີ 20 ມີນາ 2025, ພາກທີ III, ໝວດທີ 4, ມາດຕາ 20, ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ຂໍ້ຕົກລົງ ເຈົ້າແຂວງ ສະບັບເລກທີ 889/ຈຂ.ຊຍ, ລົງວັນທີ 21 ສິງຫາ 2020, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ;
- ອີງຕາມ ມະຕິ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 09 ສພຂ.ຊຍ, ລົງວັນທີ 11 / ມີນາ / 2026.

## ຄະນະກຳມະການປົກຄອງແຂວງໄຊຍະບູລີ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການໃນການຄຸ້ມຄອງເທດສະບານເມືອງໄຊຍະບູລີ ແລະ ກຳນົດການເກັບລາຍຮັບ ແລະ ການນຳໃຊ້ທຶນ ເພື່ອນຳໃຊ້ເຂົ້າໃນການພັດທະນາຕົວເມືອງໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຊຸກຍູ້ສ້າງຕົວເມືອງໄຊຍະບູລີ ເປັນຕົວເມືອງດ້ານສິ່ງແວດລ້ອມ, ເປັນຕົວເມືອງສີຂຽວ, ສະອາດ, ສວຍງາມ.

### ມາດຕາ 2 ການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງ

ການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງ ໄຊຍະບູລີ ແມ່ນ ການເຮັດໃຫ້ເທດສະບານເມືອງໄຊຍະບູລີ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະອາດສວຍງາມ, ໃຫ້ກາຍເປັນຕົວເມືອງເທດສະບານ ໂດຍການຈັດສັນ, ການເກັບມ້ຽນ, ກໍ່ສ້າງ, ສ້ອມແປງ, ຕົດແຕ່ງ, ອະນາໄມ, ປະດັບປະດາໃນຂອບເຂດຄວາມຮັບຜິດ ຊອບຂອງຕົນ.

**ມາດຕາ 3 ອະທິບາຍຄຳສັບ**

1. ການບໍລິການເກັບມ້ຽນຂີ້ເຫຍື້ອ ໝາຍເຖິງ ການຮັບໃຊ້ເກັບມ້ຽນຂີ້ເຫຍື້ອຄົວເຮືອນ, ສຳນັກງານ, ອົງການ, ສັງຄົມເພື່ອນຳໄປກຳຈັດຢູ່ສະໜາມຂີ້ເຫຍື້ອ ເຮັດໃຫ້ຕົວເມືອງມີຄວາມສະອາດ;

2. ຂີ້ເຫຍື້ອທົ່ວໄປ ໝາຍເຖິງ ຂີ້ເຫຍື້ອຄົວເຮືອນ, ສຳນັກງານ, ອົງການ, ກົມກອງ, ຫ້ອງການ ທີ່ມີຈຳນວນໜ້ອຍ;

3. ຂີ້ເຫຍື້ອອັນຕະລາຍ ໝາຍເຖິງ ຂີ້ເຫຍື້ອຈາກຫ້ອງຜ່າຕັດ, ຢາວັກແຊງ, ສານເຄມີ, ວັດຖຸເປັນພິດ ທາດເບື່ອ, ທາດລະເບີດ ແລະ ອື່ນໆ ທີ່ເປັນອັນຕະລາຍ;

4. ຂີ້ເຫຍື້ອພິເສດ ໝາຍເຖິງ ຂີ້ເຫຍື້ອຈາກການຕັດແຕ່ງຕົ້ນໄມ້, ງານບຸນ, ງານດອງ, ການທຸບມ້າງສິ່ງກໍ່ສ້າງ, ສິ່ງປຸກສ້າງ ແລະ ອື່ນໆ ທີ່ມີຈຳນວນຫຼາຍ;

5. ພັນທະ ໝາຍເຖິງ ການປະກອບສ່ວນຊຸກຍູ້ຂອງສັງຄົມຕໍ່ວຽກງານດ້ວຍວັດຖຸ, ອຸປະກອນ, ເງິນຄຳ ແລະ ເຫື່ອແຮງ;

6. ຄອບຄົວທົ່ວໄປ ໝາຍເຖິງ ຄອບຄົວພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ທີ່ບໍ່ເຮັດທຸລະກິດ;

7. ຄອບຄົວທຸລະກິດໝາຍເຖິງ ຜູ້ປະກອບການຂາຍເຄື່ອງໂດຍຖືກຕ້ອງຕາມກົດໝາຍນັບທັງທີ່ມີທະບຽນ ແລະ ບໍ່ມີທະບຽນ;

8. ນ້ຳເສຍຄົວເຮືອນ ໝາຍເຖິງການຊົມໃຊ້ນ້ຳຈາກຄອບຄົວ, ຜູ້ປະກອບການ, ບໍລິສັດ, ຫ້າງຮ້ານ ລັດວິສາຫະກິດ, ພະແນກການ, ອົງການທີ່ເປັນພື້ນຖານທາງດ້ານການສ້າງຊີວະພາບ ຫຼື ເປັນການສ້າງໜໍ່ແໜງຂອງມົນລະພິດຕໍ່ຕ້ານສິ່ງແວດລ້ອມໃນຕົວເມືອງ;

9. ການນຳໃຊ້ທີ່ດິນຂອງລັດ ໝາຍເຖິງ ບຸກຄົນທີ່ມີການນຳໃຊ້ໃນການຜະລິດ, ຄ້າຂາຍໂດຍບໍ່ມີໃບກຳມະສິດນຳທີ່ດິນໂດຍລັດເປັນຜູ້ໃຫ້ເຊົ່າ, ສຳປະທານທີ່ບໍ່ຊ້ຳຊ້ອນກັບການເກັບ ແລະ ສຳປະທານຈາກພາກສ່ວນກ່ຽວຂ້ອງເຊັ່ນ: ນຳໃຊ້ເຂດສະຫງວນແຄມນ້ຳ, ເຂດສະຫງວນແຄມທາງ ເປັນການຊື່ວຄາວອື່ນໆ;

10.ດິນທີ່ມີການພັດທະນາ ແມ່ນທີ່ດິນທີ່ມີການດັດແປງ, ບຸກເບີກໃຫ້ເປັນດິນພຽງ ສາມາດຈັດງານສະຖານທີ່ຕ່າງໆໄດ້;

11.ດິນທີ່ບໍ່ມີການພັດທະນາ ແມ່ນທີ່ດິນທຳມະຊາດທີ່ບໍ່ໄດ້ລົບກວນບຸກເບີກຖາກຖາງປັບປຸງ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຜູ້ປະກອບການຕ່າງໆ ກ່ຽວກັບວຽກງານຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ.

## ໝວດທີ 2

## ການຄຸ້ມຄອງ, ການຈັດສັນ ແລະ ການພັດທະນາ

**ມາດຕາ 5 ການຄຸ້ມຄອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ້ອງໄດ້ເອົາໃຈໃສ່ຄຸ້ມຄອງຕົວເມືອງ ໃຫ້ມີຄວາມສະອາດງາມຕາ, ປະດັບປະດາຕົວເມືອງ ໃຫ້ມີຄວາມຮຸ່ງເຮືອງເຫຼືອງເຫຼື້ອມຢູ່ສະເໝີ, ຕົ້ນໄມ້ຢູ່ໃນຂອບເຂດແບ່ງຄວາມຮັບຜິດຊອບໃຫ້ ຕ້ອງມີການຕັດແຕ່ງໃຫ້ງາມ, ການວາງເຄື່ອງຂາຍຕ້ອງມີຄວາມເປັນລະບຽບ, ການຈອດລົດ

ຕາມແຄມທາງຕ້ອງຈອດຕາມຈຸດທີ່ກຳນົດໃຫ້ຈອດ, ການຕໍ່ເຕີມເຮືອນ, ຮ້ານ, ການຕິດຕັ້ງປ້າຍໂຄສະນາຕ່າງໆ ຕ້ອງປະຕິບັດຕາມລະບຽບກົດໝາຍວາງອອກ, ການຂົນສິ່ງຫີນດິນ, ຊາຍ ເຂົ້າໃນຕົວເມືອງຕ້ອງມີຜ້າປົກປິດ, ບໍ່ໃສ່ລົ້ນກະບະລົດ, ບໍ່ຕົກເຮ່ຍຕາມເສັ້ນທາງ, ການຂົນສິ່ງເຄື່ອງຮັບໃຊ້ອຸປະໂພກ ແລະ ບໍລິໂພກ ຕ່າງໆ ເຂົ້າໃນຕົວເມືອງ ຕ້ອງຮັບປະກັນ ບໍ່ໃສ່ເກີນນ້ຳໜັກທີ່ກຳນົດ ແລະ ຕ້ອງເຂົ້າໃນຊ່ວງທີ່ຕົວເມືອງບໍ່ແອອັດ, ດິນເປົ່າຫວ່າງຕ້ອງໄດ້ມີການຖາກຖາງ, ຕັດຫຍ້າ, ອະນາໄມຮ່ອງນ້ຳ, ຮູນ້ຳຂ້າງທາງໃຫ້ສະອາດ, ການຈັດງານຕ່າງໆ ຕ້ອງປະຕິບັດຕາມລະບຽບກົດໝາຍວາງອອກ, ທຸກຄອບຄົວ, ສຳນັກງານຕ້ອງໄດ້ປະດັບປະດາໜ້າເຮືອນ, ສຳນັກງານຂອງຕົນດ້ວຍການປູກຫຍ້າ, ປູກດອກໄມ້, ວາງໂຖດອກໄມ້, ສ້າງຮົ້ວງາມ, ເຮັດອະນາໄມໃຫ້ມີຄວາມສະອາດສວຍງາມການຜະລິດເຄື່ອງອຸປະໂພກ ແລະ ບໍລິໂພກຕ່າງໆຕ້ອງຮັບປະກັນ ແລະ ບໍ່ມີການລົບກວນຄົນອື່ນຕ້ອງໄດ້ເອົາໃຈໃສ່ຮັກສາຄວາມສະອາດຢ່າງເປັນປະຈຳ.

**ມາດຕາ 6 ການຈັດສັນ**

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ມີໜ້າທີ່ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ມີການວາງແຜນ, ຂຶ້ນແຜນ, ການກໍ່ສ້າງ, ສ້ອມແປງບຳລຸງຮັກສາ, ຄຸ້ມຄອງ, ຈັດສັນສະຖານທີ່ສາທາລະນະ, ລະບົບຮ່ອງລະບາຍນ້ຳທຳມະຊາດ, ຮ່ອງລະບາຍນ້ຳແຄມທາງ, ສວນດອກໄມ້ຕາມເສັ້ນທາງ, ດອນແບ່ງທາງ. ນຳພາຕິດຕາມ, ກວດກາການຈັດຕັ້ງປະຕິບັດກົດລະບຽບ ການຄຸ້ມຄອງຕົວເມືອງຢູ່ຂັ້ນບ້ານ, ການເຮັດອະນາໄມ ປະດັບປະດາຕົວເມືອງ ແລະ ອື່ນໆ ໃນເຂດສະບານເມືອງໄຊຍະບູລີ.

**ມາດຕາ 7 ການພັດທະນາ**

ການພັດທະນາຕົວເມືອງໄຊຍະບູລີ ແມ່ນໜ້າທີ່ຄວາມຮັບຜິດຊອບຂອງໝົດທຸກຄົນ, ເຊິ່ງເລີ່ມຈາກຄອບຄົວ, ບ້ານ, ອົງການຈັດຕັ້ງຕ່າງໆ ທຸກພາກສ່ວນມີສ່ວນຮ່ວມໃຫ້ກາຍເປັນຄວາມຮັບຜິດຊອບຂອງທົ່ວປວງຊົນເຊັ່ນ: ການກໍ່ສ້າງ, ການສ້ອມແປງ, ການຕົບແຕ່ງປະດັບປະດາ, ການໂຄສະນາຕ່າງໆ, ການຜະລິດກະສິກຳ, ອຸດສາຫະກຳ, ການເຮັດທຸລະກິດ ແລະ ກິດຈະກຳທີ່ສິ່ງອອກ, ການຄ້າຂາຍຕ້ອງເອົາໃຈໃສ່ໃນການປົກປັກຮັກສາຕົວເມືອງໃຫ້ມີຄວາມສະອາດ, ສວຍງາມເຮັດໃຫ້ຕົວເມືອງເປັນຕາໜ້າຢູ່, ໜ້າທ່ຽວຊົມເພື່ອດຶງດູດບັນດານັກທ່ອງທ່ຽວຈາກພາຍໃນ ແລະ ຕ່າງປະເທດ.

## ໝວດທີ 3
## ສິດ, ໜ້າທີ່ ແລະ ການກວດກາ

**ມາດຕາ 8 ສິດຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ**

1. ພົວພັນ, ເຈລະຈາ ແລະ ກ້າວເຖິງການເຊັນສັນຍາ, ອະນຸສັນຍາ ແລະ ຂໍ້ຜູກພັນກູ້ຢືມ ຫຼື ຊ່ວຍເຫຼືອລ້າກັບພາກສ່ວນຕ່າງໆຂອງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງມະຫາຊົນ ຕາມລະບຽບກົດໝາຍວາງອອກ;

2. ເປັນເຈົ້າຂອງ ແລະ ນຳໃຊ້ພາຫະນະກົນຈັກ, ວັດຖຸອຸປະກອນຕ່າງໆ ພ້ອມທັງຊັບສົມບັດອື່ນໆຂອງຕົນ ລວມທັງສິດທີ່ນຳໃຊ້ທີ່ດິນ ຕາມການມອບໝາຍຂອງຂະແໜງການເງິນ;

3. ມີສິດ ຖືບັນຊີ, ເກັບລາຍຮັບຕາມທີ່ໄດ້ລະບຸໄວ້ໃນໝວດທີ V ຂອງດຳລັດ ເລກທີ 177/ນຍ ແລະ ການນຳໃຊ້ທຶນຈາກພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດຂອງສະພາແຫ່ງຊາດ;

4. ສະເໜີປັບປຸງໂຄງປະກອບການຈັດຕັ້ງ, ຊັບຊ້ອນ, ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍ, ປົດຕຳແໜ່ງ, ຍ້ອງຍໍ ແລະ ປະຕິບັດວິໄນຕໍ່ລັດຖະກອນທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;

5. ມີສິດ ສ້າງລະບຽບການພາຍໃນ ແລະ ປັບໃໝຜູ້ລະເມີດກົດລະບຽບຂອງລັດ ແລະ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງວາງອອກ ບົນພື້ນຖານການເຫັນດີເປັນເອກະພາບກັບຄະນະກຳມະການປົກຄອງແຂວງ;

6. ພົວພັນ ແລະ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ຂອງຕົນໃຫ້ສຳເລັດຜົນ.

**ມາດຕາ 9 ໜ້າທີ່ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ**

1. ວາງແຜນ,ຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ກວດກາ ວຽກງານພັດທະນາຕົວເມືອງ, ໃນໄລຍະເບື້ອງຕົ້ນສຸມໃສ່ບັນດາກິດຈະການ ທີ່ເປັນບູລິມະສິດຂອງໂຄງການພັດທະນາ ຢູ່ໃນເນື້ອທີ່ການຄຸ້ມຄອງຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ, ຫລັງຈາກນັ້ນຈຶ່ງຂະຫຍາຍບັນດາວຽກງານເຫຼົ່ານັ້ນໃຫ້ກາຍເປັນຕົວເມືອງເທດສະບານຢ່າງສົມບູນ;

2. ກໍ່ສ້າງ, ປັບປຸງ, ບູລະນະໂຄງລ່າງ ແລະ ການບໍລິການຕົວເມືອງ ເຊິ່ງລວມມີ: ຖະໜົນຫົນທາງ, ຮ່ອງລະບາຍນ້ຳ, ເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອ, ປ້ອງກັນຕ້ານເຈື່ອນ, ປ້ອງກັນນ້ຳຖ້ວມ, ອານາໄມ ແລະ ຮັກສາສິ່ງແວດລ້ອມ, ແສງສະຫວ່າງສາທາລະນະ, ສວນສາທາລະນະ;

3. ຄຸ້ມຄອງ ແລະ ຄວບຄຸມການຈັດຕັ້ງປະຕິບັດວຽກງານການປຸກສ້າງ ແລະ ການພັດທະນາອື່ນໆໃນຂອບເຂດຂອງ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ທີ່ກຳນົດໄວ້ ໂດຍມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງ;

4. ສະໜອງຂໍ້ມູນຂ່າວສານ ແລະ ເອກະສານເຕັກນິກອັນຈຳເປັນຕ່າງໆ ທີ່ກ່ຽວພັນກັບການພັດທະນາຕົວເມືອງໃນເຂດ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ໃຫ້ແກ່ອຳນາດການປົກຄອງແຂວງ, ເມືອງ, ບ້ານ ແລະ ອົງການຈັດຕັ້ງມະຫາຊົນ ເພື່ອປຸກລະດົມຂົນຂວາຍປະຊາຊົນ ໃຫ້ເຂົ້າຮ່ວມໃນການພັດທະນາ ແລະ ບູລະນະປັບແປງຕາມແຜນການພັດທະນາຕົວເມືອງ;

5. ມີໜ້າທີ່ ສ້າງແຫຼ່ງລາຍຮັບ ຕາມທີ່ໄດ້ລະບຸໄວ້ໃນໝວດທີ V ຂອງດຳລັດເລກທີ 177/ນຍ ແລະ ນຳໃຊ້ທຶນດັ່ງກ່າວຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

6. ໜ້າທີ່ອື່ນໆ ທີ່ເຫັນວ່າຈຳເປັນເຊິ່ງຖືກອະນຸມັດ ແລະ ມອບໝາຍໃຫ້ໂດຍການຕົກລົງເຫັນດີຂອງຄະນະກຳມະການປົກຄອງແຂວງ.

**ມາດຕາ 10 ໜ້າທີ່ ຂອງອົງການປົກຄອງບ້ານ**

1. ຄຸ້ມຄອງຂອບເຂດບ້ານຂອງຕົນໃນທຸກດ້ານຮ່ວມກັບອົງການຈັດຕັ້ງຂອງລັດ;

2. ນຳພາປະຊາຊົນກໍ່ສ້າງສ້ອມແປງຖະໜົນຫົນທາງ, ຮ່ອງລະບາຍນ້ຳ ແລະ ປົກປັກຮັກສາຊັບສົມບັດສ່ວນລວມຂອງບ້ານ, ພ້ອມກັນນັ້ນ ຄະນະຮັບຜິດຊອບຂັ້ນບ້ານ ຕ້ອງນຳພາຄອບຄົວ, ສຳນັກງານຕ່າງໆໃນຂອບເຂດບ້ານຂອງຕົນ ປົວລະບັດຮັກສາໜ້າເຮືອນ, ໜ້າສຳນັກງານທີ່ຕິດກັບຖະໜົນຫົນທາງໃຫ້ມີຄວາມສະອາດ ແລະ ປະດັບປະດາຕົ້ນໄມ້, ດອກໄມ້, ໂຖດອກໄມ້ໃຫ້ສວຍງາມ;

3. ມອບຄວາມຮັບຜິດຊອບໃຫ້ຄອບຄົວ, ສຳນັກງານຕ່າງໆປົວລະບັດ, ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ, ສະອາດ, ສວຍງາມໃນຂອບເຂດທີ່ຢູ່ອາໄສຂອງຕົນ ແລະ ອ້ອມຮອບ;

4. ກວດກາທຸກຄອບຄົວຕ້ອງມີຮ່ອງລະບາຍນ້ຳຈາກຄົວເຮືອນ, ມີຂຸມພັກນ້ຳຈາກການນຳໃຊ້ນ້ຳຄົວເຮືອນຮ້ານ, ສຳນັກງານຕ່າງໆ ທີ່ບໍ່ເປັນການລົບກວນຄົນອື່ນ ແລະ ສັງຄົມ, ມີກະຕ່າຖິ້ມຂີ້ເຫຍື້ອ ແລະ ອື່ນໆ;

5. ມີໜ້າທີ່ລະດົມ, ຊຸກຍູ້ຄອບຄົວຢູ່ພາຍໃນບ້ານຂອງຕົນ ໃນການປະກອບສ່ວນຄ່າພັນທະຕໍ່ຕົວເມືອງເປັນຕົ້ນແມ່ນ: ຄ່າບໍລິການເກັບມ້ຽນຂີ້ເຫຍື້ອ, ຄ່ານໍ້າເສຍຄົວເຮືອນ ແລະ ຄ່າພັນທະອື່ນໆ.

**ມາດຕາ 11 ການກວດກາ**

1. ຄະນະຄຸ້ມຄອງ, ກວດກາຄວາມປັນລະບຽບຮຽບຮ້ອຍໃນຕົວເມືອງ ປະກອບດ້ວຍ: ອົງການພັດທະນາ ແລະ ບໍລິຫານຕົວເມືອງ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກໍາ ແລະ ສິ່ງແວດລ້ອມ, ພະແນກອຸດສາຫະກໍາ ແລະ ການຄ້າ, ພະແນກວັດທະນະທໍາ ແລະ ການທ່ອງທ່ຽວ, ພະແນກຈະລາຈອນແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງໄຊຍະບູລີ, ລັດວິສາຫະກິດໄຟຟ້າລາວ ແລະ ພາກສ່ວນອື່ນໆ ກ່ຽວຂ້ອງທີ່ມີສ່ວນຮ່ວມ ໃນການຈັດຕັ້ງປະຕິບັດ ໂດຍໄດ້ຮັບການແຕ່ງຕັ້ງຈາກຄະນະກໍາມະການປົກຄອງແຂວງ;

2. ຄະນະກວດກາດັ່ງກ່າວມີໜ້າທີ່ລົງກວດກາເທດສະບານເມືອງໄຊຍະບູລີ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດ, ສວຍງາມ, ໃນທຸກໆເດືອນ ຕ້ອງນໍາເອົາຜົນການກວດກາ ແລະ ປະເມີນຜົນວຽກງານດັ່ງກ່າວ ລາຍງານໃຫ້ຂັ້ນເທິງຊາບ ແລະ ສະເໜີຂໍທິດຊີ້ນໍາໃນການແກ້ໄຂບັນຫາທີ່ຄ້າງຄາ;

3. ພະແນກການເງິນແຂວງຕ້ອງແຕ່ງຕັ້ງຄະນະກວດກາ ລົງກວດກາທາງດ້ານການເງິນຂອງ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເພື່ອຊ່ວຍກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງທາງດ້ານບັນຊີລາຍຮັບ ແລະ ລາຍຈ່າຍ ລວມທັງບັນຊີເງິນຝາກທະນາຄານຢ່າງໜ້ອຍປີລະຄັ້ງ ແລ້ວລາຍງານຂັ້ນເທິງຊາບ;

4. ອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບຂັ້ນບ້ານຈໍານວນ 5-7 ທ່ານ ເພື່ອນໍາພາຄຸ້ມຄອງ, ຕິດຕາມ, ກວດກາ ແລະ ອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ໃຫ້ປະກົດຜົນເປັນຈິງ;

5. ຄະນະຮັບຜິດຊອບຂັ້ນບ້ານ ຕ້ອງລາຍງານການເຄື່ອນໄຫວວຽກງານຄຸ້ມຄອງບ້ານຂອງຕົນ ຕາມຂໍ້ຕົກລົງສະບັບນີ້ ທຸກໆ ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ ໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ ເພື່ອລາຍງານຂັ້ນເທິງ.

## ໝວດທີ 4
## ການເກັບລາຍຮັບ ແລະ ການນໍາໃຊ້ທຶນ

**ມາດຕາ 12 ການເກັບລາຍຮັບ**

ອະນຸຍາດໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງເກັບລາຍຮັບຄ່າບໍລິການ, ຄ່າພັນທະຕໍ່ຕົວເມືອງເຊິ່ງກໍານົດພື້ນຖານ ແລະ ການເກັບແຕ່ລະລາຍການຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 13 ອັດຕາການເກັບຄ່າບໍລິການເກັບມ້ຽນຂີ້ເຫຍື້ອ**

ອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ ໄດ້ຮັບໃຊ້ບໍລິການເກັບມ້ຽນຂີ້ເຫຍື້ອຈາກປະຊາຊົນ, ນັກທຸລະກິດ, ບໍລິສັດຫ້າງຮ້ານຕ່າງໆ ລວມໄປເຖິງສໍານັກງານ, ອົງການຂອງລັດ ແລະ ເອກະຊົນ ເຊິ່ງໄດ້ຄິດໄລ່ອັດຕາການເກັບແຕ່ລະປະເພດລຸ່ມນີ້:

**1. *ປະເພດຄອບຄົວທົ່ວໄປ***

ຄອບຄົວທົ່ວໄປ **25.000 ກີບ/ຄອບຄົວ/ເດືອນ**

(ຍົກເວັ້ນຄອບຄົວປ່ຽວພອຍ, ຄອບຄົວຂາດແຮງງານ ໂດຍມີການຢັ້ງຢືນຈາກອໍານາດການປົກຄອງບ້ານ).

**2. ປະເພດທີ່ຈະຕ້ອງໄດ້ຈ່າຍ 33.000 ກີບ/ເດືອນ**

ຂາຍຂອງກິນສຸກ, ຂາຍເຂົ້າປຽກ, ເຂົ້າຊອຍ, ຂາຍຕຳຊົ້ວະ, ຂາຍຕຳໝາກຮຸ່ງ ແລະ ຕຳອື່ນໆ, ຂາຍນໍ້າ, ຂາຍເຄື່ອງຍ່ອຍ, ຮ້ານຕັດຜົມ, ຮ້ານເສີມຄວາມງາມ(ເສີມສວຍ), ຮ້ານຫຍິບເຄື່ອງ, ຕົ້ມເຫຼົ້າ, ຜະລິດເສັ້ນເຂົ້າປຸ້ນ, ເສັ້ນເຝີ, ເສັ້ນເຂົ້າປຽກ, ເຂົ້າຊອຍ, ເຂົ້າຈີ່, ເຂົ້າໜົມ, ຮ້ານຂາຍຢາ ເລກ 3, ຮ້ານຕີອັດຖຸມີຄ່າ, ສະຖານທີ່ອົບນວດ, ຮ້ານສະນຸກເກີ.

**3. ປະເພດທີ່ຈະຕ້ອງໄດ້ຈ່າຍ 35.000 ກີບ/ເດືອນ**

ຂາຍນໍ້າອ້ອຍ, ຜະລິດໜັງຍໍາ, ໂຮງງານຜະລິດເສັ້ນເຂົ້າປຸ້ນ, ເສັ້ນເຝີ, ເສັ້ນເຂົ້າປຽກ, ເສັ້ນເຂົ້າຊອຍ, ຮ້ານຂາຍຢາ ເລກ 2, ຮ້ານຂາຍຫົວອາຫານ, ຮ້ານຂາຍລົດຖີບ, ຮ້ານຂາຍລົດຈັກ, ຮ້ານຂາຍເຄື່ອງໃຊ້ຫ້ອງການຮ້ານຂາຍໂທລະສັບ, ຮ້ານຂາຍຕົ້ນໄມ້, ໂຖດອກໄມ້ປະດັບ, ຮ້ານຂາຍທາດບຸຊາ ແລະ ຂາຍໂລງສົບ, ໂຮງສີເຂົ້າ, ຂົນສົ່ງ.

**4. ປະເພດທີ່ຈະຕ້ອງໄດ້ຈ່າຍ 45.000 ກີບ/ເດືອນ**

ເຕົາດິນຈີ່, ເຕົາຖ່ານ, ຮ້ານຂາຍຢາ 1, ຄຼີນິກເອກະຊົນ, ໄຊຍະກຳ, ສ້ອມແປງລົດຈັກ, ຮ້ານຕັດແກ້ວ, ຮ້ານປິ່ນເອກະສານ, ກ໊ອບປີ, ຮ້ານຖ່າຍຮູບຮ້ານຂາຍປຶ້ງທຸກປະເພດ, ສະຖານທີ່ອອກກຳລັງກາຍ, ຮ້ານສ້ອມແປງເຄື່ອງໃຊ້ໄຟຟ້າ, ຮ້ານອັດຊິດ, ຮ້ານຂາຍເຄື່ອງໄຟຟ້າ, ຮ້ານຂາຍເຄື່ອງອະໄລ່, ຮ້ານຂາຍແກັດ, ຮ້ານຂາຍໄມ້ແປຮູບ, ຮ້ານຮັບຊື້-ຂາຍເຄື່ອງປ່າຂອງດົງ, ໂຮງງານຜະລິດນໍ້າດື່ມ, ນໍ້າກ້ອນ, ໂຮງງານເຟີນີເຈີ, ຮ້ານຂາຍເຟີນີເຈີ, ຂາຍໝາກພ້າວ, ສົນເຊື້ອ.

**5. ປະເພດທີ່ຈະຕ້ອງໄດ້ຈ່າຍ 55.000 ກີບ/ເດືອນ**

ໂຮງງານປຸງແຕ່ງໄມ້ສຳເລັດຮູບ, ຮ້ານຕາບຢາງລົດໃຫຍ່, ເຮືອນພັກ ຂະໜາດ 10 ຫ້ອງລົງມາໂຮງງານປຸງແຕ່ງໄມ້ສຳເລັດຮູບ, ສະລອຍນໍ້າ.

**6. ປະເພດທີ່ຈະຕ້ອງໄດ້ຈ່າຍ 65.000 ກີບ/ເດືອນ**

ຮ້ານຂາຍລົດໃຫຍ່, ສ້ອມແປງລົດໃຫຍ່, ຮ້ານບັນເທີງ, ຄາລາໂອເກະ, ຣີສອດ.

**7. ປະເພດທີ່ຈະຕ້ອງໄດ້ຈ່າຍ 75.000 ກີບ/ເດືອນ**

ເຮືອນພັກ ຂະໜາດ 11 ຫ້ອງຫາ 15 ຫ້ອງ, ຄີວລົດ, ປໍ້ານໍ້າມັນ, ຮ້ານຂາຍເຄື່ອງກໍ່ສ້າງ, ໂຮງເລື່ອຍໄມ້ຂະໜາດໃຫຍ່.

**8. ປະເພດທີ່ຈະຕ້ອງໄດ້ຈ່າຍ 95.000 ກີບ/ເດືອນ**

ບໍລິສັດ, ລັດວິສາຫະກິດ, ເຮືອນພັກ ຂະໜາດ 16 ຫ້ອງຫາ 19 ຫ້ອງ.

**9. ປະເພດທີ່ຈະຕ້ອງໄດ້ຈ່າຍ 150.000 ກີບ/ເດືອນ**

ຮ້ານຂາຍຊີ້ນດາດ, ຊີ້ນຈຸ່ມ, ຮ້ານອາຫານ, ຮ້ານຂາຍເຄື່ອງສົ່ງ.

**10. ກອງບັນຊາການທະຫານແຂວງ, ກອງບັນຊາການ ປກສ ແຂວງ**

| | |
|---|---|
| 1) ກອງບັນຊາການທະຫານແຂວງ | ຕ້ອງໄດ້ຈ່າຍ 110.000 ກີບ/ເດືອນ; |
| 2) ກອງບັນຊາການທະຫານເມືອງ ໄຊຍະບູລີ | ຕ້ອງໄດ້ຈ່າຍ 55.000 ກີບ/ເດືອນ; |
| 3) ກອງພັນນ້ອຍ | ຕ້ອງໄດ້ຈ່າຍ 45.000 ກີບ/ເດືອນ; |
| 4) ກອງຮ້ອຍ | ຕ້ອງໄດ້ຈ່າຍ 35.000 ກີບ/ເດືອນ; |
| 5) ກອງບັນຊາ ປກສ ແຂວງ | ຕ້ອງໄດ້ຈ່າຍ 110.000 ກີບ/ເດືອນ; |
| 6) ກອງບັນຊາການ ປກສ ເມືອງໄຊຍະບູລີ | ຕ້ອງໄດ້ຈ່າຍ 55.000 ກີບ/ເດືອນ; |
| 7) ກອງພັນເຄື່ອນທີ່ 08 | ຕ້ອງໄດ້ຈ່າຍ 55.000 ກີບ/ເດືອນ; |

8) ຫ້ອງຕຳຫຼວດ ປກສ ແຂວງ ຕ້ອງໄດ້ຈ່າຍ 55.000 ກີບ/ເດືອນ;

9) ໂຮງຮຽນນາຍສິບຕຳຫຼວດ ຕ້ອງໄດ້ຈ່າຍ 110.000 ກີບ/ເດືອນ;

10) ກອງປາບປາມຢາເສບຕິດ ຕ້ອງໄດ້ຈ່າຍ 55.000 ກີບ/ເດືອນ;

11) ໂຮງຮຽນດັດສ້າງ, ບຳບັດແຂວງ ຕ້ອງໄດ້ຈ່າຍ 110.000 ກີບ/ເດືອນ;

12) ໂຮງຮຽນດັດສ້າງ, ບຳບັດເມືອງ ໄຊຍະບູລີ ຕ້ອງໄດ້ຈ່າຍ 110.000 ກີບ/ເດືອນ.

**11. ປະເພດທີ່ຈະຕ້ອງໄດ້ຈ່າຍ ພິເສດ**

1) ຕະຫຼາດຮ້ານຮຸນລາວ (ສີມຸງຄຸນ) 2.300.000 ກີບ/ເດືອນ;

2) ທະນາຄານ 120.000 ກີບ/ເດືອນ;

3) ໂຮງແຮມ 160.000 ກີບ/ເດືອນ;

4) ຮ້ານເກັບຊື້ເຫຼັກເສດ ແລະ ເຄື່ອງເກົ່າ 120.000 ກີບ/ເດືອນ;

5) ໂຮງໝໍແຂວງ 400.000 ກີບ/ຖ້ຽວ;

6) ຕະຫຼາດຈີນ (ບ້ານນາໄຮ) 400.000 ກີບ/ຖ້ຽວ;

7) ຕະຫຼາດຊຸມຊົນ 160.000 ກີບ/ເດືອນ.

**12. ປະເພດສຳນັກງານ, ອົງການອ້ອມຂ້າງແຂວງ, ເມືອງ.**

1) ປະເພດທີ່ຈະຕ້ອງໄດ້ຈ່າຍ 65.000 ກີບ/ເດືອນ

ຫ້ອງວ່າການປົກຄອງແຂວງ, ພະແນກການ, ອົງການທຽບເທົ່າຂັ້ນແຂວງ.

2) ປະເພດທີ່ຈະຕ້ອງໄດ້ຈ່າຍ 55.000 ກີບ/ເດືອນ

ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ຫ້ອງວ່າການປົກຄອງເມືອງ, ຫ້ອງການ ການເງິນເມືອງ, ຫ້ອງການຕາແສງ.

3) ປະເພດທີ່ຈະຕ້ອງໄດ້ຈ່າຍ 45.000 ກີບ/ເດືອນ

ຫ້ອງການ, ອົງການທຽບເທົ່າຂັ້ນເມືອງ, ຫ້ອງການກຸ່ມບ້ານ.

4) ວັດ ຕ້ອງໄດ້ຈ່າຍ 30.000 ກີບ/ເດືອນ.

**13. ປະເພດໂຮງຮຽນ.**

1) ໂຮງຮຽນວິຊາຊີບ 250.000 ກີບ/ເດືອນ;

2) ໂຮງຮຽນການເມືອງ-ການປົກຄອງ 150.000 ກີບ/ເດືອນ;

3) ໂຮງຮຽນມັດທະຍົມ

- ນ້ອຍ ຈຳນວນພົນ 300 ຄົນລົງມາ 200.000 ກີບ/ເດືອນ;
- ກາງ ຈຳນວນພົນ 301-1200 ຄົນ 250.000 ກີບ/ເດືອນ;
- ໃຫຍ່ ຈຳນວນພົນ 1201 ຄົນ ຂຶ້ນໄປ 300.000 ກີບ/ເດືອນ;

4) ໂຮງຮຽນປະຖົມ

- ນ້ອຍ ຈຳນວນພົນ 120 ຄົນລົງມາ 60.000 ກີບ/ເດືອນ;
- ກາງ ຈຳນວນພົນ 121-300 ຄົນ 160.000 ກີບ/ເດືອນ;
- ໃຫຍ່ ຈຳນວນພົນ 301 ຄົນ ຂຶ້ນໄປ 300.000 ກີບ/ເດືອນ;

5) ໂຮງຮຽນອະນຸບານ

- ລ້ຽງເດັກ + ປະຖົມ 70.000 ກີບ/ເດືອນ;
- ລ້ຽງເດັກ + ອະນຸບານ 50.000 ກີບ/ເດືອນ;

6) ໂຮງຮຽນເອກະຊົນ

- ໂຮງຮຽນເອກະຊົນ 50 ຄົນລົງມາ 50.000 ກີບ/ເດືອນ;
- ໂຮງຮຽນເອກະຊົນ 51- 100 ຄົນ 110.000 ກີບ/ເດືອນ;
- ໂຮງຮຽນເອກະຊົນ 101 ຄົນຂຶ້ນໄປ 280.000 ກີບ/ເດືອນ;
- **ຍົກເວັ້ນການເກັບຄ່າບໍລິການໃນເວລາພັກສຶກຮຽນປະຈຳປີ.**

**14. ຄ່າບໍລິການຂີ້ເຫຍື້ອພິເສດ.**

1) ເຮືອນດີ, ເຮືອນບຸນ 300.000 ກີບ/ຖ້ຽວ;
2) ຄ່າບໍລິການຂົນສິ່ງງ່າໄມ້, ເຫງົ້າໄມ້, ຕົ້ນໄມ້ອື່ນໆ 500.000 ກີບ/ຖ້ຽວ;
3) ງານບຸນ, ງານດອງ 500.000 ກີບ/ຖ້ຽວ;
4) ຄ່າບໍລິການຂີ້ເຫຍື້ອງານຕະຫຼາດນັດ 500.000 ກີບ/ຖ້ຽວ;
5) ຄ່າບໍລິການຂີ້ເຫຍື້ອເປັນຖັງ 400.000 ກີບ/ຖ້ຽວ.

(ບໍ່ລວມຄ່າກຳມະກອນຂົນຂີ້ເຫຍື້ອຂຶ້ນລົດ).

- ສຳລັບເຮືອນດີ ຄອບຄົວທຸກຍາກ, ປ່ວຍພອຍ, ຂາດແຮງງານ ແມ່ນຍົກເວັ້ນ ໂດຍໄດ້ຮັບການຢັ້ງຢືນຈາກອຳນາດການປົກຄອງບ້ານ.

**ມາດຕາ 14 ອັດຕາການເກັບຄ່າບໍລິການຄຸ້ມຄອງສະໜາມຂີ້ເຫຍື້ອ**

**1. ຄ່າບໍລິການຄຸ້ມຄອງສະໜາມຂີ້ເຫຍື້ອ ສະເພາະບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ**

| ລ/ດ | ເນື້ອໃນລາຍການ | ອັດຕາການເກັບ | ຫົວໜ່ວຍຄິດໄລ່ |
|---|---|---|---|
| 1 | ປະເພດລົດ ອີແຕນ, ລົດກະບະ, ລົດໄຖນາເດີນຕາມ, ລົດສົ້ງ | 50.000 ກີບ | ຖ້ຽວ |
| 2 | ປະເພດລົດ ຮຸນໄດ, ລົດໄຖນາໃຫຍ່ | 80.000 ກີບ | ຖ້ຽວ |
| 3 | ປະເພດລົດຮຸນໄດກະບະເສີມ (ດັດແປງ) | 120.000 ກີບ | ຖ້ຽວ |
| 4 | ປະເພດລົດ 6 ລໍ້ 3 ແມັດກ້ອນ | 150.000 ກີບ | ຖ້ຽວ |
| 5 | ປະເພດລົດ 6 ລໍ້ 5 ແມັດກ້ອນ | 200.000 ກີບ | ຖ້ຽວ |
| 6 | ປະເພດລົດ 6 ລໍ້ 8 ແມັດກ້ອນ | 250.000 ກີບ | ຖ້ຽວ |
| 7 | ປະເພດລົດ 10 ລໍ້ | 300.000 ກີບ | ຖ້ຽວ |
| 8 | ປະເພດລົດ 12 ລໍ້ຂຶ້ນໄປ | 500.000 ກີບ | ຖ້ຽວ |

**2. ຄ່າບໍລິການຄຸ້ມຄອງສະໜາມຈາກຜູ້ບໍລິການດູດອົດຖ່າຍ**

| ລ/ດ | ລາຍການ | ອັດຕາການເກັບ | ຫົວໜ່ວຍຄິດໄລ່ | ໝາຍເຫດ |
|---|---|---|---|---|
| 1 | ລົດປະເພດ 3ແມັດກ້ອນ | 75.000 ກີບ | 1 ຖ້ຽວລົດ | |
| 2 | ລົດປະເພດ 5ແມັດກ້ອນ | 100.000 ກີບ | 1 ຖ້ຽວລົດ | |

**ມາດຕາ 15 ອັດຕາການເກັບຄ່າບໍລິການສະຖານທີ່ຈອດລົດ ຢູ່ເຂດສາທາລະນະຕາມຊຸມຊົນ ທີ່ກຳນົດໃຫ້ຈອດ**

| ລ/ດ | ລາຍການ | ອັດຕາການເກັບ | ຫົວໜ່ວຍຄິດໄລ່ | ໝາຍເຫດ |
|---|---|---|---|---|

| | | | | |
|---|---|---|---|---|
| 1 | ລໍ້ຍູ້, ລົດຖີບ | 2.000 ກີບ | ຄັ້ງ | |
| 2 | ລົດຈັກ | 3.000 ກີບ | ຄັ້ງ | |
| 3 | ລົດໄຖນາເດີນຕາມ-ລົດສິ່ງ, ລົດຕຸກໆ | 5.000 ກີບ | ຄັ້ງ | |
| 4 | ລົດ 4 ລໍ້ທຸກຊະນິດ | 8.000 ກີບ | ຄັ້ງ | |
| 5 | ລົດ 6 ລໍ້ທຸກຊະນິດ | 10.000 ກີບ | ຄັ້ງ | |
| 6 | ລົດ 10 ລໍ້ທຸກຊະນິດ | 20.000 ກີບ | ຄັ້ງ | |
| 7 | ລົດ 12 ລໍ້ທຸກຊະນິດ | 30.000 ກີບ | ຄັ້ງ | |

**ມາດຕາ 16 ຄ່ານ້ຳເສຍຄົວເຮືອນ**

ຄອບຄົວທົ່ວໄປ **5.000** ກີບ/ເດືອນ

**ມາດຕາ 17 ຄ່າບູລະນະສ້ອມແປງ ແລະ ກະແສໄຟຟ້າເຍືອງທາງໃນ 24 ບ້ານເທດສະບານ**

1. **ຄອບຄົວທົ່ວໄປ ຕ້ອງໄດ້ຈ່າຍ 3.000 ກີບ/ເດືອນ**
2. **ປະເພດທຸລະກິດການຜະລິດ**
   - ຂະໜາດນ້ອຍ ຕ້ອງໄດ້ຈ່າຍ 4.000 ກີບ/ເດືອນ;
   - ຂະໜາດກາງ ຕ້ອງໄດ້ຈ່າຍ 5.000 ກີບ/ເດືອນ;
   - ຂະໜາດໃຫຍ່ ຕ້ອງໄດ້ຈ່າຍ 6.000 ກີບ/ເດືອນ.
3. **ຮ້ານອາຫານ**
   - ຂະໜາດນ້ອຍ ຕ້ອງໄດ້ຈ່າຍ 10.000 ກີບ/ເດືອນ;
   - ຂະໜາດກາງ ຕ້ອງໄດ້ຈ່າຍ 20.000 ກີບ/ເດືອນ;
   - ຂະໜາດໃຫຍ່ ຕ້ອງໄດ້ຈ່າຍ 30.000 ກີບ/ເດືອນ.
4. **ບໍລິສັດ, ລັດວິສາຫະກິດ,ທະນາຄານທຸກສາຂາ**ຕ້ອງໄດ້ຈ່າຍ 120.000 ກີບ/ເດືອນ;
5. **ໂຮງແຮມ** ຕ້ອງໄດ້ຈ່າຍ 120.000 ກີບ/ເດືອນ;
6. **ເຮືອນພັກ ຂະໜາດ 5–10 ຫ້ອງ** ຕ້ອງໄດ້ຈ່າຍ 30.000 ກີບ/ເດືອນ;
7. **ເຮືອນພັກ ຂະໜາດ 11–15 ຫ້ອງ** ຕ້ອງໄດ້ຈ່າຍ 60.000 ກີບ/ເດືອນ;
8. **ເຮືອນພັກ ຂະໜາດ 16–19 ຫ້ອງ** ຕ້ອງໄດ້ຈ່າຍ 90.000 ກີບ/ເດືອນ;
9. **ພະແນກການ,ປກສ, ປກຊ, ອົງການທຽບເທົ່າອ້ອມຂ້າງແຂວງ** ຕ້ອງໄດ້ຈ່າຍ 120.000 ກີບ/ເດືອນ;
10. **ອົງການຈັດຕັ້ງອ້ອມຂ້າງແຂວງ** ຕ້ອງໄດ້ຈ່າຍ 60.000 ກີບ/ເດືອນ;
11. **ຫ້ອງການອ້ອມຂ້າງເມືອງ, ປກສ,ປກຊ,ເມືອງ**ຕ້ອງໄດ້ຈ່າຍ 30.000 ກີບ/ເດືອນ;
12. **ອົງການຈັດຕັ້ງອ້ອມຂ້າງເມືອງ** ຕ້ອງໄດ້ຈ່າຍ 20.000 ກີບ/ເດືອນ;
13. **ໂຮງຮຽນ**
   - ໂຮງຮຽນອະນຸບານ ຕ້ອງໄດ້ຈ່າຍ 5.000 ກີບ/ເດືອນ;
   - ໂຮງຮຽນປະຖົມ ຕ້ອງໄດ້ຈ່າຍ 10.000 ກີບ/ເດືອນ;
   - ໂຮງຮຽນມັດທະຍົມຕອນຕົ້ນ ຕ້ອງໄດ້ຈ່າຍ 20.000 ກີບ/ເດືອນ;
   - ໂຮງຮຽນມັດທະຍົມຕອນປາຍ ຕ້ອງໄດ້ຈ່າຍ 30.000 ກີບ/ເດືອນ;
   - ໂຮງຮຽນວິຊາຊີບ ຕ້ອງໄດ້ຈ່າຍ 90.000 ກີບ/ເດືອນ.
14. **ໂຮງໝໍ** ຕ້ອງໄດ້ຈ່າຍ 120.000 ກີບ/ເດືອນ.

**ມາດຕາ 18 ການອອກໃບອະນຸຍາດຕິດຕັ້ງປ້າຍໂຄສະນາປະເພດຕ່າງໆ**

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເປັນຜູ້ອອກໃບອະນຸຍາດຕິດຕັ້ງປ້າຍໂຄສະນາຕ່າງໆ ແລະ ການນຳໃຊ້ທີ່ດິນເຂດສະຫງວນຂອງລັດ ໂດຍມີການປະເມີນ, ຄິດໄລ່ ຄ່າບໍລິການ ດັ່ງນີ້:

**1. ການອະນຸຍາດຕິດຕັ້ງປ້າຍໂຄສະນາ**

- ປ້າຍໂຄສະນາສິນຄ້າຊະນິດແຂງ ປະກອບມີ: ປ້າຍທີ່ເຮັດດ້ວຍໄມ້, ໂລຫະຕ່າງໆ, ແຜ່ນປຼາສຕິກແຂງ ຊີມັງ ແລະ ປ້າຍອື່ນໆ ທີ່ຄ້າຍຄຽງ ຈະເກັບຄ່າບໍລິການເປັນຈຳນວນເງິນມູນຄ່າ 4.5 ກີບ/ຊມ$^2$/ປ້າຍ;

- ຕິດຕັ້ງປ້າຍໃສ່ປະຕູໂຊງຢູ່ພາຍໃນເທດສະບານຈະເກັບຄ່າບໍລິການເປັນຈຳນວນເງິນມູນຄ່າ 2.5 ກີບ/ຊມ$^2$/ປ້າຍ(ການຕິດຕັ້ງ ອະນຸຍາດ ບໍ່ໃຫ້ເກີນ 7 ວັນ).

- ປ້າຍໂຄສະນາສິນຄ້າຊະນິດອ່ອນ ປະກອບມີ: ປ້າຍທີ່ເຮັດດ້ວຍແຜ່ນແພ, ຜ້າຢາງປຼາສຕິກ 2 ກີບ/ຊມ$^2$/ປ້າຍ (ການຕິດຕັ້ງ ອະນຸຍາດ ບໍ່ໃຫ້ເກີນ 7 ວັນ).

**2. ຄ່າບໍລິການນຳໃຊ້ປ້າຍໃນທີ່ດິນເຂດສະຫງວນຂອງລັດ**

- ຄ່າບໍລິການນຳໃຊ້ທີ່ດິນຂອງລັດ ສຳລັບປ້າຍທີ່ບໍ່ໃຊ້ແສງສະຫວ່າງ 200.000 ກີບ/ມ$^2$/ປີ;

- ຄ່າບໍລິການນຳໃຊ້ທີ່ດິນຂອງລັດ ສຳລັບປ້າຍທີ່ໃຊ້ແສງສະຫວ່າງ 250.000 ກີບ/ມ$^2$/ປີ; (ບໍ່ລວມຄ່າບໍລິການນຳໃຊ້ດິນຂອງລັດ).

**ມາດຕາ 19 ຄ່າບໍລິການນຳໃຊ້ທີ່ດິນເຂດສະຫງວນຂອງລັດ (ໃນຂອບເຂດເທດສະບານເມືອງ) ໂດຍບໍ່ມີການຊ້ຳຊ້ອນຈາກພາກສ່ວນກ່ຽວຂ້ອງ**

ຄ່າບໍລິການນຳໃຊ້ທີ່ດິນເຂດສະຫງວນຂອງລັດ (ໃນຂອບເຂດເທດສະບານເມືອງ) ປະກອບມີ ດັ່ງນີ້:

1. ທີ່ດິນສາທາລະນະທີ່ມີການພັດທະນາແລ້ວໃນໄລຍະສັ້ນ 1.000 ກີບ/ມ$^2$/ເດືອນ;
2. ທີ່ດິນສາທາລະນະທີ່ມີການພັດທະນາແລ້ວໃນໄລຍະຍາວ 10.000 ກີບ/ມ$^2$/ປີ;
3. ທີ່ດິນສາທາລະນະທີ່ບໍ່ທັນພັດທະນາໃນໄລຍະສັ້ນ 500 ກີບ/ມ$^2$/ເດືອນ;
4. ທີ່ດິນສາທາລະນະທີ່ບໍ່ທັນພັດທະນາໃນໄລຍະຍາວ 5.000 ກີບ/ມ$^2$/ປີ;
5. ທີ່ດິນສາທາລະນະເພື່ອຈັດງານໃນໄລຍະສັ້ນບໍ່ເກີນ 1 ອາທິດ 1.000 ກີບ/ມ$^2$/ມື້;
6. ການທູບທາງຍ່າງ ແປງທາງເຂົ້າເຮືອນ ແລະ ເຂດບໍລິການຕ່າງໆ 200.000 ກີບ/ແມັດ;
7. ເພື່ອກໍ່ສ້າງກິດຈະກຳປະເພດຕ່າງໆ 200.000 ກີບ/ມ$^2$/ປີ.

**ມາດຕາ 20 ການນຳໃຊ້ທຶນ**

**1. ການນຳໃຊ້ທຶນຈາກຄ່າບໍລິການ.**

ອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີນຳໃຊ້ທຶນຈາກການເກັບທີ່ກ່າວມາຂ້າງເທິງຕາມດຳລັດ ເລກທີ 177/ນຍ ແລະ ຂໍ້ຕົກລົງ ເລກທີ 2083/ກງ, ໄດ້ກຳນົດຕາມລະບຽບການ ແລະ ໄດ້ແບ່ງອອກເປັນ 2 ສ່ວນໃຫຍ່ຄື: ສ່ວນແບ່ງ 85% ນຳໃຊ້ເຂົ້າໃນການບໍລິຫານຕົວເມືອງ, ປົວລະບັດຮັກສາສິ່ງສາທາລະນະໃນຕົວເມືອງ, ອະນາໄມຖະໜົນຫົນທາງ, ຮ່ອງລະບາຍນ້ຳຂ້າງທາງ, ແກ້ໄຂນ້ຳຖ້ວມຂັງໃນຕົວເມືອງ, ປົວລະບັດຮັກສາສວນສາທາລະນະ, ນຳໃຊ້ເຂົ້າໃນວຽກງານກິດຈະກຳເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອສິ່ງເສດເຫຼືອຕ່າງໆ ເປັນຕົ້ນແມ່ນ: ນ້ຳມັນລົດ, ເງິນເດືອນກຳມະກອນ, ຄ່າບຳລຸງຮັກສາ ແລະ ສ້ອມແປງພາຫະນະ, ຕັດແຕ່ງຕົ້ນໄມ້ປະດັບປະດາແຄມທາງ, ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ ADB ຂອງໂຄງການຕົວເມືອງນ້ອຍ (ເງິນກູ້ຕໍ່ຊ່ວງກະຊວງການເງິນມອບໄວ້ໃຫ້) ນຳໃຊ້ວຽກງານບໍລິຫານຕ່າງໆ, ສ່ວນແບ່ງ 15% ມອບໃຫ້ບ້ານ ຫຼື ຜູ້ເກັບເງິນປະຈຳບ້ານ (ຜູ້ປະຕິບັດຕົວຈິງ).

**2. ການນຳໃຊ້ທຶນຈາກຄ່າປັບໃໝ.**

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ນໍາໃຊ້ເງິນທົດແທນຄ່າເສຍຫາຍແບ່ງອອກເປັນ 2 ສ່ວນ ຄື: 30% ມອບເຂົ້າອົງການພັດທະນາ ແລະ ບໍລິຫານຕົວເມືອງ ໃຊ້ຈ່າຍບໍລິຫານ ແລະ ທຶນໝູນວຽນ, 70% ມອບໃຫ້ພາກສ່ວນຈັດຕັ້ງປະຕິບັດຕົວຈິງ.

## ໝວດທີ 5
## ວ່າດ້ວຍ ຂໍ້ຫ້າມ

### ມາດຕາ 21 ຂໍ້ຫ້າມສໍາລັບພະນັກງານ

1. ຫ້າມພະນັກງານເກັບລາຍຮັບ ນໍາໃຊ້ໃບບິນເກັບເງິນທີ່ບໍ່ເປັນທາງການ, ໃບບິນບໍ່ມີກາຈ້ຳ, ປອມແປງໃບບິນ ແລະ ຫ້າມນໍາໃຊ້ເງິນທີ່ເກັບໄດ້ໄປໝູນໃຊ້ວຽກສ່ວນຕົວຢ່າງເດັດຂາດ;

2. ຫ້າມພະນັກງານວິຊາການ ນາບຂູ່ ເພື່ອຜົນປະໂຫຍດສ່ວນຕົວໃນເວລາລົງປະຕິບັດໜ້າທີ່ວຽກງານ;

3. ຫ້າມພະນັກງານວິຊາການ ເຄື່ອນໄຫວໜ້າທີ່ເກີນຂອບເຂດເພື່ອຫວັງຜົນປະໂຫຍດສ່ວນຕົວ.

### ມາດຕາ 22 ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ບັນຈຸຂີ້ເຫຍື້ອໃສ່ກະຕ່າ, ເປົາ, ຖົງ ແລະ ອື່ນໆ ບໍ່ໃຫ້ເກີນ 25 ກິໂລກລາມ ແລະ ບໍ່ໃຫ້ເກີນ 5 ເປົາ/ຄອບຄົວ, ຖ້າເກີນຈະຄິດໄລ່ ເປັນຖົງຂີ້ເຫຍື້ອພິເສດ;

2. ຖິ້ມຂີ້ເຫຍື້ອຊະຊາຍໃສ່ດິນເປົ່າຫວ່າງ, ແຄມທາງ ຫ້ວຍຮ່ອງ, ຄອງບຶງ ແລະ ຊາຍແດນລະຫວ່າງບ້ານຕໍ່ບ້ານ;

3. ປ່ອຍສັດຊະຊາຍໃນຕົວເມືອງ ຊຶ່ງເປັນການສ້າງຄວາມເສຍຫາຍ, ລົບກວນສັງຄົມ;

4. ປະດິນເປົ່າຫວ່າງ ທີ່ບໍ່ມີການພັດທະນາ ແລະ ເກີດມີຫຍ້າຮົກເຮື້ອ ໃນຕົວເມືອງ;

5. ເອົາລົດຂຶ້ນ, ຈອດຢຽບທາງຍ່າງ, ຂາຍເຄື່ອງ ແລະ ວາງສິ່ງກີດຂວາງໃສ່ຂອບເຂດທາງຍ່າງ ຢ່າງເດັດຂາດ;

6. ນໍາໃຊ້ບ່ອນສາທາລະນະແຄມທາງເປັນບ່ອນຝາກລົດໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

7. ຕັດຮອນ ແລະ ຕັດຕົ້ນໄມ້ປະດັບແຄມທາງ ຂອງອົງການຈັດຕັ້ງທີ່ໄດ້ປູກໄວ້;

8. ອັດຕັນ ແລະ ສ້າງສິ່ງກີດຂວາງ ໃສ່ຮ່ອງລະບາຍນ້ຳ ແລະ ຄອງນ້ຳທໍາມະຊາດໃນຕົວເມືອງ;

9. ເຮັດໃຫ້ມີກິ່ນເໝັນ, ຂີ້ວ, ນ້ຳທີ່ບໍ່ໄດ້ຮັບການບໍາບັດ ຈາກຄົວເຮືອນ, ສໍານັກງານ ແລະ ກິດຈະການ ແລະ ຈູດຂີ້ເຫຍື້ອ, ເຜົາຖ່ານ, ດົມຈີ່ ຊະຊາຍ ຊຶ່ງເປັນການສ້າງມົນລະພິດຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

10. ຕາກເຄື່ອງຊະຊາຍ ຊຶ່ງເຮັດໃຫ້ບໍ່ເປັນລະບຽບ ແລະ ງາມຕາ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເປັນຜູ້ສະຫລຸບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຕົວເມືອງໃຫ້ຂັ້ນເທິງ ແລະ ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍບຸກຄົນ, ນິຕິບຸກຄົນກົມກອງທີ່ມີຜົນງານປະກອບສ່ວນ ໃນການຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ທີ່ໄດ້ຮັບຜົນອັນສູງສຸດຕໍ່ການພັດທະນາຕົວເມືອງ ໄຊຍະບູລີ ຕາມຄວາມເໝາະສົມ.

**ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ລະເມີດ ຂໍ້ຕົກລົງ ສະບັບນີ້ ຈະຖືກກ່າວເຕືອນ, ສຶກສາ ອົບຮົມ, ລົງວິໄນ, ໃຊ້ແທນຄ່າເສຍຫາຍ, ປັບໃໝ ແລະ ດໍາເນີນຄະດີຕາມແຕ່ລະກໍລະນີໜັກ ຫຼື ເບົາ.

**1. ການປັບໃໝ ແລະ ໃຊ້ແທນຄ່າເສຍຫາຍ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຕ້ອງໃຊ້ແທນຄ່າເສຍຫາຍ ດັ່ງນີ້:

- ຕິດຕັ້ງປ້າຍໂຄສະນາ, ເສົາສັນຍານໂທລະສັບທີ່ບໍ່ມີໃບອະນຸຍາດ ຈະຖືກປັບໃໝ 10% ຂອງມູນຄ່າການກໍ່ສ້າງພ້ອມທັງມ້າງອອກ ແລະ ຢຸດເຊົາ;

- ວາງທໍ່ລອດທາງເຂົ້າເຮືອນ, ທຸບທາງຍ່າງ ແລະ ອື່ນໆທີ່ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຈະຖືກປັບໃໝ **200.000** ກີບ/ຄັ້ງ ພ້ອມທັງໃຫ້ຢຸດເຊົາການກໍ່ສ້າງ ແລະ ທົດແທນຄ່າເສຍຫາຍໃຫ້ຢູ່ສະພາບເດີມ;

- ປິດທາງສັນຈອນໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ **200.000** ກີບ/ມື້;

- ຕັ້ງໂຕະ, ຕັ້ງແຜ່ນປ້າຍໂຄສະນາຕ່າງໆຫຼືວາງຕາດຂາຍເຄື່ອງວັດສະດຸຕ່າງໆໃສ່ທາງຍ່າງໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ **200.000** ກີບ/ມື້;

- ຖົມ ຫຼື ອັດຕັນຮ່ອງນໍ້າ, ຄອງນໍ້າທໍາມະຊາດໃນຕົວເມືອງ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຈະຖືກປັບໃໝ **200.000** ກີບ/ຄັ້ງ, ພ້ອມທັງທົດແທນຄ່າເສຍຫາຍ ໃຫ້ຢູ່ໃນສະພາບເດີມ;

- ຖິ້ມໜອງຢູ່ໃນເຂດອະນຸລັກເຂດສະຫງວນຂອງລັດໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຈະຖືກປັບໃໝ **300.000** ກີບ/ຄັນລົດ, ພ້ອມທັງທົດແທນຄ່າເສຍຫາຍໃຫ້ຢູ່ໃນສະພາບເດີມ;

- ລ້ຽງສັດ, ປ່ອຍສັດ ຊະຊາຍຢູ່ໃນຕົວເມືອງ ຊຶ່ງເປັນການສ້າງຄວາມເສຍຫາຍ, ລົບກວນສັງຄົມ ປະເພດ ແກະ, ແບ້ຈະຖືກປັບໃໝ **200.000** ກີບ/ໂຕ/ຄັ້ງ, ພ້ອມທັງຄິດໄລ່ຄ່າລ້ຽງ, ຄ່າຮັກສາ **50.000** ກີບ/ໂຕ/ວັນ ແລະ ຄິດໄລ່ຄ່າສິ້ນເປືອງຕ່າງໆ 100.000ກີບ/ຄັ້ງ, ປະເພດ ງົວ, ຄວາຍ, ມ້າຈະຖືກປັບໃໝ **500.000** ກີບ/ໂຕ/ຄັ້ງ, ພ້ອມທັງຄິດໄລ່ຄ່າລ້ຽງ, ຄ່າຮັກສາ **100.000** ກີບ/ໂຕ/ວັນ ແລະ ຄິດໄລ່ຄ່າສິ້ນເປືອງຕ່າງໆ 200.000ກີບ/ຄັ້ງ;

- ຕັດຕົ້ນໄມ້, ປະດັບຢູ່ໃນສວນສາທາລະນະ ແລະ ແຄມທາງຫຼວງໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຈະຖືກປັບໃໝ **1.000.000** ກີບ/ຕົ້ນ ແລະ ຄິດໄລ່ຄ່າບໍາລຸງຮັກສາ **300.000** ກີບ/ປີທີ່ປູກຜ່ານມາ ພ້ອມທັງຄິດໄລ່ຄ່າຕົ້ນໄມ້, ຄ່າປູກທົດແທນຄືນ, ຄ່າບູລະນະຮັກສາ **2.000.000** ກີບ/ຕົ້ນ;

- ຂັບລົດຕໍາໂຖດອກໄມ້ ແລະ ດອນແບ່ງທາງເປ່ເພ ຈະຖືກປັບໃໝ **500.000** ກີບ/ຄັ້ງ, ພ້ອມທັງທົດແທນຄ່າເສຍຫາຍໃຫ້ຢູ່ໃນສະພາບເດີມ;

- ໃຊ້ດິນສາທາລະນະແຄມທາງເປັນບ່ອນຈອດລົດເພື່ອຜົນປະໂຫຍດສ່ວນຕົວ ແລະ ເຂດຫ້າມຈອດເປັນບ່ອນຈອດລົດໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ **200.000** ກີບ/ຄັນ;

- ເອົາລົດຂຶ້ນ, ຈອດຢຽບທາງຍ່າງໃສ່ຂອບເຂດທາງຍ່າງ ຈະຖືກປັບໃໝ ປະເພດ ລົດຂົນສົ່ງ **300.000** ກີບ/ຄັນ, ລົດກະບະ, ລົດເກັງ, ລົດຈິບ, ລົດຕູ້ **200.000** ກີບ/ຄັນ, ລົດຈັກ **50.000** ກີບ/ຄັນ;

- ຂາຍເຄື່ອງ ແລະ ວາງສິ່ງກີດຂວາງໃສ່ຂອບເຂດທາງຍ່າງ ຈະຖືກປັບໃໝ **300.000** ກີບ/ຄັ້ງ;

- ວາງໄມ້, ກ້ອນເບຕົງ, ເຫຼັກ ດິນ, ຫີນ, ຊາຍ ແລະ ອື່ນໆ ຕັນແລວນໍ້າໄຫຼແຄມທາງ, ຈະຖືກປັບໃໝ **200.000** ກີບ/ມື້;

- ນໍາໃຊ້ດິນສາທາລະນະເພື່ອຜົນປະໂຫຍດສ່ວນຕົວ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ຈະຖືກປັບໃໝ **300.000** ກີບ/ຄັ້ງ;

- ຕາກເຄື່ອງຊະຊາຍ ຊຶ່ງເຮັດໃຫ້ບໍ່ເປັນລະບຽບ ແລະ ງາມຕາ ຈະຖືກປັບໃໝ 100.000 ກີບ/ຄັ້ງ;

- ປະດິນເປົ່າຫວ່າງທີ່ບໍ່ມີການພັດທະນາ ແລະ ເກີດມີຫຍ້າຮົກເຮື້ອຈະຖືກປັບໃໝ 10.000 ກີບ/ມ²/ເດືອນ;

- ເຮືອນເປ່ເພຊຸດໂຊມ, ຮົກເຮື້ອບໍ່ມີການປັບປຸງ ຈະຖືກປັບໃໝ 200.000-400.000 ກີບ/ເດືອນ;

- ປ່ອຍໃຫ້ຮົ້ວຊຸດໂຊມຕາມແຄມທາງ (ເປ່ເພ, ບໍ່ເປັນລະບຽບ) ຈະຖືກປັບໃໝ 10.000 ກີບ/ແມັດຍາວ/ອາທິດ;

- ປ່ອຍໃຫ້ຫຍ້າຮົກເຮື້ອຕາມເສັ້ນທາງທີ່ຢູ່ຕອນດິນຕົນເອງຮັບຜິດຊອບ ຈະຖືກປັບໃໝ 200.000 ກີບ/ມື້;

- ຮ່ອງລະບາຍນ້ຳໃນຂອບເຂດຮັບຜິດຊອບ ທີ່ບໍ່ອະນາໄມເຮັດໃຫ້ນ້ຳຂັງ ຈະຖືກປັບໃໝ 200.000 ກີບ/ມື້;

- ປະເພດພາຫະນະທີ່ສ້າງຄວາມເປື້ອນເປິະຕາມເສັ້ນທາງຕົວເມືອງ ຈະຖືກປັບໃໝ 300.000 ກີບ/ຄັ້ງ/ຄັນ, ພ້ອມທັງທົດແທນຄ່າເສຍຫາຍໃຫ້ມີຄວາມສະອາດ;

- ລົດຂົນສົ່ງ ດິນ, ຫີນ, ຊາຍ ແລະ ວັດສະດຸກໍ່ສ້າງບໍ່ມີຜ້າປົກປິດເຂົ້າໃນຕົວເມືອງ ຈະຖືກປັບໃໝ 300.000 ກີບ/ຄັ້ງ/ຄັນ;

- ຖິ້ມຂີ້ເຫຍື້ອອອກຈາກລົດ ເຈົ້າຂອງລົດ ຈະຖືກປັບໃໝ 100.000 ກີບ/ຄັນລົດ ພ້ອມທັງທົດແທນຄ່າເສຍຫາຍເກັບມ້ຽນຄືນໃຫ້ສະອາດ;

- ຖິ້ມຂີ້ເຫຍື້ອຊະຊາຍຕາມຈຸດຕ່າງໆ, ຕາມເສັ້ນທາງ, ແມ່ນ້ຳ, ດິນເປົ່າຫວ່າງໂດຍບໍ່ແມ່ນສະໜາມທີ່ກຳນົດໃຫ້ຖິ້ມຂີ້ເຫຍື້ອຈະຖືກປັບໃໝ 500.000 ກີບ/ຄັ້ງ, ພ້ອມທັງທົດແທນຄ່າເສຍຫາຍໃຫ້ຢູ່ໃນສະພາບເດີມ;

- ທຳລາຍເສັ້ນທາງ, ຂຸດເສັ້ນທາງຫຼວງ, ທາງຊອຍພາຍໃນບ້ານໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ, ຈະຖືກປັບໃໝປະເພດ ທາງປູຢາງ 500.000 ກີບ/ແມັດຍາວ, ທາງປູຫີນ, ດິນ 300.000 ກີບ/ແມັດຍາວ ພ້ອມທັງໃຫ້ສ້ອມແປງໃຫ້ຢູ່ໃນສະພາບເດີມ;

- ທຳລາຍຊັບສິນບັດສ່ວນລວມ ຫຼື ຂອງຄົນອື່ນ ໂດຍເຈດຕະນາ ຈະຖືກປັບໃໝ 500.000 ກີບ/ຄັ້ງ ພ້ອມທັງໃຫ້ທົດແທນຄ່າເສຍຫາຍ ແລະ ປັບປຸງໃຫ້ຢູ່ສະພາບເດີມ;

- ເຮັດໃຫ້ມີກິ່ນເໝັນ, ຂີ້ວ, ນ້ຳທີ່ບໍ່ໄດ້ຮັບການບຳບັດ ຈາກຄົວເຮືອນ, ສຳນັກງານ ແລະ ກິດຈະການ ແລະ ຈູດຂີ້ເຫຍື້ອ, ເຜົາຖ່ານ, ເຜົາດິນຈີ່ຊະຊາຍ ຊຶ່ງເປັນການສ້າງມົນລະພິດຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈະຖືກປັບໃໝ 500.000 ກີບ/ຄັ້ງ;

- ກິດຈະການ, ທຸລະກິດຕ່າງໆເກີນຂອບເຂດຂອງດິນກວມເຂດສະຫງວນຂອງລັດຈະຖືກປັບໃໝ 300.000 ກີບ/ຄັ້ງ;

- ຖອກນ້ຳມັນເຄື່ອງ, ລ້າງເຄື່ອງເປື້ອນເປິະຊະຊາຍຕາມທາງຢ່າງ, ຕາມເຂດສະຫງວນແຄມທາງ, ຈະຖືກປັບໃໝ 200.000 ກີບ/ຄັ້ງ, ພ້ອມທັງທົດແທນຄ່າເສຍຫາຍໃຫ້ຢູ່ໃນສະພາບເດີມ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 25 ການຈັດຕັ້ງປະຕິບັດ

1. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕ້ອງເປັນໃຈກາງ ໃນການສົມທົບ ກັບຄະນະຄຸ້ມຄອງກວດກາຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ໜ່ວຍງານກວດກາຂັ້ນບ້ານ ລົງກວດກາຂອບເຂດຄວາມຮັບຜິດຊອບຂອງຕົນ ເດືອນລະ 1 ຄັ້ງພ້ອມທັງສະຫຼຸບລາຍງານໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ ເພື່ອສະເໜີຂໍທິດຊີ້ນຳໃນການແກ້ໄຂບັນຫາ ແລະ ສະເໜີຍ້ອງຍໍບຸກຄົນ, ກົມກອງທີ່ມີຜົນງານ;

2. ການປັບໃໝແຕ່ລະຄັ້ງ ຕ້ອງໃຊ້ບິນທາງການ ເຊິ່ງອົງການພັດທະນາ ແລະ ບໍລິຫານຕົວເມືອງເປັນຜູ້ອະນຸມັດໃຫ້;

3. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕ້ອງສະຫຼຸບບັນຊີສັງລວມ ແລະ ລາຍງານລາຍຮັບ-ລາຍຈ່າຍຂອງຕົນ ພ້ອມທັງວາງແຜນການກໍ່ສ້າງລາຍຮັບ ແລະ ກໍານົດລາຍຈ່າຍໃນປີຕໍ່ໄປໂດຍປະຕິບັດຕາມຂໍ້ກໍານົດ ແລະ ລະບຽບກົດໝາຍ ວ່າດ້ວຍການບັນຊີແຫ່ງລັດໃຫ້ຂັ້ນເທິງຊາບໃນແຕ່ລະປີ;

4. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ໄຊຍະບູລີ ຕ້ອງແຕ່ງຕັ້ງໜ່ວຍງານຊຸກຍູ້ເກັບລາຍຮັບຈາກແຫຼ່ງລາຍຮັບຕ່າງໆ ທີ່ໄດ້ກໍານົດຢູ່ຂ້າງເທິງນີ້ ໃຫ້ເປັນອັນລະອຽດ ແລະ ຈະແຈ້ງ.

5. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕ້ອງເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດມາດຕະການປັບໃໝຕ່າງໆໃຫ້ມີຜົນສັກສິດ;

6. ມອບໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງ ໄຊຍະບູລີ ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 1025/ຈຂ.ຊຍ, ລົງວັນທີ 8 ກັນຍາ 2022, ວ່າດ້ວຍການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງ ໄຊຍະບູລີ.

**ຄະນະກໍາມະການປົກຄອງແຂວງ**

**ປະທານ**

ດວງຕາ ໄຊວຸດ